ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
-------===000===--------

ກະຊວງກະສິກຳ ແລະປ່າໄມ້.

ເລກທີ 0267 /ກປ.2000.
ວຽງຈັນ,ວັນທີ......19 DEC 2000...

# <u>ຄຳສັ່ງແນະນຳ</u>

## ວ່າດ້ວຍການດັດສົມ ແລະມາດຖານ
## ສຳລັບ ການດັດສົມໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້.

ເຖິງ: ທ່ານຫົວໜ້າກົມປ່າໄມ້
ທ່ານຫົວໜ້າພະແນກກະສິກຳ ແລະປ່າໄມ້ແຂວງ,ກຳແພງນະຄອນ ແລະເຂດພິເສດ.

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ,ລົງວັນທີ 04/10/2000, ວ່າດ້ວຍການຄຸ້ມຄອງວຽກງານປ່າໄມ້ ແລະທຸລະກິດໄມ້ ທີ່ໄດ້ກຳນົດໄວ້ຢູ່ຂໍ້ທີ 16.
- ອີງຕາມລະບຽບການ ວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງໄມ້ ແລະຜະລິດຕະພັນປ່າໄມ້ ສະບັບເລກທີ 0261 /ກປ.2000, ລົງວັນທີ 30 / 11 / 2000.

ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງ ແລະລະບຽບການທີ່ກ່າວມາຂ້າງເທິງນັ້ນ ໃຫ້ປະກົດຜົນເປັນຈິງ ແລະ ມີຄວາມເປັນເອກະພາບ ທາງດ້ານທັດສະນະ ແລະການຈັດຕັ້ງປະຕິບັດ ພ້ອມທັງຮັກສາໄດ້ຄວາມສາມັກຄີ ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແນໃສ່ເຮັດໃຫ້ ຈຳນວນໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້ ສອດຄ່ອງ ແລະສົມດູນ ກັບຄວາມອາດສາມາດ ຕອບສະໜອງໄດ້ ຂອງຊັບພະຍາກອນປ່າໄມ້ ທຳມະຊາດ ແລະ ປ່າປູກທີ່ມີຢູ່ໃນປະຈຸບັນ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງແນະນຳດັ່ງນີ້:**

1. ໃຫ້ກົມປ່າໄມ້ , ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ແລະອຳນາດການປົກຄອງທ້ອງຖິ່ນ ດຳເນີນການດັດສົມໂຮງງານປຸງແຕ່ງໄມ້ ແລະຜະລິດຕະພັນປ່າໄມ້ ໃນຂອບເຂດທົ່ວປະເທດຄືນໃໝ່.

2. **ການດັດສົມໂຮງງານປຸງແຕ່ງໄມ້ ແລະຜະລິດຕະພັນປ່າໄມ້** ໃຫ້ອີງໃສ່ 5 **ມາດຖານຕົ້ນຕໍດັ່ງນີ້:**

2.1. <u>**ຄວາມອາດສາມາດໃນການຕອບສະໜອງວັດຖຸດິບໄມ້ ແລະຜະລິດຕະພັນປ່າໄມ້**</u>
ຄວາມອາດສາມາດໃນການຕອບສະໜອງວັດຖຸດິບໄມ້ ແລະຜະລິດຕະພັນປ່າ

ໄມ້ຈາກເຂດປ່າຜະລິດ,ປ່າປູກ ແລະໂຄງການພັດທະນາຕ່າງໆ ຂອງລັດຖະບານ ຢູ່ໃນແຕ່ລະແຂວງ,ກຳແພງນະຄອນ ແລະເຂດພິເສດ.

2.2. <u>ໂຄງປະກອບການຜະລິດຂອງໂຮງງານ</u>:

ກ. ຄວາມອາດ ສາມາດ ຕອບສະໜອງ ແຫຼ່ງວັດຖຸດິບໄມ້ ແລະ ຜະລິດຕະພົນປ່າໄມ້ ຈາກປ່າທຳມະຊາດ,ປ່າປູກ ແລະ ໂຄງການພັດທະນາຕ່າງໆ ຂອງແຂວງ ເພື່ອປ້ອນ ໃຫ້ໂຮງງານ/ ປີ.

ຂ. ຂະບວນການຜະລິດຂອງໂຮງງານ, ລັກສະນະຂອງການຜະລິດ ແລະປຸງແຕ່ງໄມ້ ເປັນຜະລິດຕະພັນສຳເລັດຮູບ,ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ແລະຈຳໜ່າຍພາຍ ໃນ.

ຄ. ເທັກໂນໂລຊີ ທີ່ນຳໃຊ້ເຂົ້າໃນການຜະລິດ ແລະປຸງແຕ່ງ: ລັກສະນະຂອງເຄື່ອງຈັກ ຕ້ອງຄົບຊຸດຕາມເປົ້າໝາຍ, ເຄື່ອງຈັກທີ່ປະກອບໃນໂຮງງານ ຕ້ອງທັນສະໄໝ, ສະມັດຕະພາບການຜະລິດຂອງເຄື່ອງຈັກສູງ, ຄຸນນະພາບຂອງບັນດາຜະລິດຕະ ພັນ ທີ່ໂຮງງານຜະລິດອອກມາ ຕ້ອງໄດ້ມາດຕະຖານດີ.

ງ. ເງື່ອນໄຂດ້ານການຕະຫລາດ ຕ້ອງມີຄວາມໝັ້ນຄົງ.

2.3. <u>ລະບົບປ້ອງກັນສິ່ງແວດລ້ອມ, ຄວາມປອດໄພ ຂອງກຳມະກອນ ແລະ ສະຫວັດດີ ການສັງຄົມຂອງໂຮງງານ</u>:

ກ. ຕ້ອງມີລະບົບປ້ອງກັນສິ່ງແວດລ້ອມທີ່ດີ.

ຂ. ເຄື່ອງມື ແລະເຄື່ອງຈັກທີ່ຮັບໃຊ້ການຜະລິດ ຕ້ອງມີຄວາມປອດໄພ ຕໍ່ກຳມະກອນ.

ງ. ລະບອບສະຫວັດດີການສັງຄົມ ຂອງໂຮງງານ ຕໍ່ກຳມະກອນ ຕ້ອງສອດຄ່ອງ ກັບ ແນວທາງນະໂຍບາຍຂອງພັກ ແລະລັດຖະບານວາງອອກ.

2.4. <u>ລະບົບການບໍລິຫານ ແລະການຄຸ້ມຄອງໂຮງງານ</u>.

ກ. ຖານະທາງ ດ້ານການລົງທຶນຂອງໂຮງງານ ຕ້ອງໝັ້ນຄົງ.

ຂ. ການຄຸ້ມຄອງໂຮງງານ ຕ້ອງໄປຕາມລະບົບຕ່ອງໂສ້ ຂອງການຜະລິດ.

ຄ. ການບໍລິຫານໂຮງງານ ຕ້ອງມີລະບົບບັນຊີ ຕິດຕາມການຜະລິດ,ການນຳເຂົ້າເຄື່ອງ ຈັກ ແລະວັດຖຸອຸປະກອນ ພ້ອມທັງການຈຳໜ່າຍ ທີ່ໜ້າເຊື່ອຖືໄດ້.

ງ. ມີແຜນຜັງໂຮງງານທີ່ເປັນລະບຽບຮຽບຮ້ອຍ, ມີສະໜາມໄມ້ທ່ອນ,ສະຖານທີ່ເກັບ ມ້ຽນ ຜະລິດຕະພົນປ່າໄມ້, ວັດຖຸອຸປະກອນ ແລະຜະລິດຕະພັນ ທີ່ເໝາະສົມ ແລະ ຖືກຕ້ອງຕາມມາດຖານ ທາງດ້ານເຕັກນິກວິຊາການ.

2.5. <u>ຄຸນສົມບັດ ຂອງຜູ້ຈັດການໂຮງງານ</u>.

ກ. ການປະຕິບັດພັນທະຕ່າງໆໃຫ້ແກ່ລັດ ແລະສັງຄົມໄດ້ດີ ແລະເປັນປົກກະຕິ.

ຂ. ສະຕິໃນການເຄົາລົບລະບຽບກົດໝາຍຂອງບ້ານເມືອງໄດ້ດີ.

ຄ. ບໍ່ເຄີຍມີໜີ້ສິນຄຸມເຄືອ.

ງ. ບໍ່ເຄີຍ ມີຄະດີໃນການລັກລອບ ແລະທຳລາຍຊັບພະຍາກອນປ່າໄມ້.

3. ເພື່ອຄວາມສະດວກ ແລະເປັນເອກະພາບ ໃນການເກັບກຳ ແລະສະຫຼຸບສັງລວມ ມອບໃຫ້ກົມປ່າໄມ້ ເປັນຜູ້ກຳນົດ ແລະອອກແບບຟອມ ກ່ຽວກັບຮ່າງຄຳຖາມເຈາະຈີ້ມ ແລະ ເກັບກຳຂໍ້ມູນໂຮງງານປຸງແຕ່ງໄມ້ ແລະຜະລິດຕະພັນປ່າໄມ້.

4. ຜ່ານການ ຈັດຕັ້ງປະຕິບັດແຕ່ລະໄລຍະ ແລະ ພາຍຫຼັງ ຈັດຕັ້ງປະຕິບັດສຳເລັດແລ້ວ ໃຫ້ສະຫຼຸບສັງລວມ ລາຍງານກະຊວງ ກະສິກຳ ແລະປ່າໄມ້ , ແຂວງ, ກຳແພງນະຄອນ ແລະເຂດພິເສດ ເພື່ອຊາບ ແລະໃຫ້ທິດຊີ້ນຳເພີ້ມເຕີມ.

5. ມອບໃຫ້ກົມປ່າໄມ້, ພະແນກກະສິກຳ ແລະປ່າໄມ້ ແຂວງ, ກຳແພງນະຄອນ, ເຂດພິເສດ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ຄຳສັ່ງແນະນຳ ສະບັບນີ້ ໃຫ້ປະກົດຜົນເປັນຈິງ.

6. ຄຳສັ່ງແນະນຳ ສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ທີ່ໄດ້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ປະຈຳການ ກະຊວງກະສິກຳ ແລະປ່າໄມ້.

ສົ່ງນ ສະພັງທອງ

<u>ບ່ອນນຳສົ່ງ</u>:

- ຫ້ອງວ່າການສູນກາງພັກ ( ເພື່ອຊາບ ແລະໃຊ້ຕ່າງລາຍງານ ).
- ຫ້ອງການສຳນັກງານນາຍົກລັດຖະມົນຕີ ( ເພື່ອຊາບ ແລະໃຊ້ຕ່າງລາຍງານ ).
- ຫ້ອງວ່າການ ປົກຄອງແຂວງ,ກຳແພງນະຄອນ ແລະເຂດພິເສດ(ເພື່ອຊາບ ແລະຊ່ວຍຊີ້ນຳໃນການຈັດຕັ້ງປະຕິບັດ ).
- ກະຊວງ ການເງິນ ( ເພື່ອຊາບ ).
- ກະຊວງ ການຄ້າ ແລະທ່ອງທ່ຽວ ( ເພື່ອຊາບ ).
- ກະຊວງ ອຸດສາຫະກຳ ແລະຫັດຖະກຳ ( ເພື່ອຊາບ ).
- ເກັບມ້ຽນ.